ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

ແຂວງຫຼວງນໍ້າທາ

ເລກທີ..04...../ຈຂ

ຫຼວງນໍ້າທາ, ວັນທີ10..ກໍລະກົດ 2014

**ຄໍາສັ່ງ**

**ຂອງເຈົ້າແຂວງ**

**ວ່າດ້ວຍການຫ້າມປູກກ້ວຍໃສ່ດິນນາ.**

- **ເຖິງ:** ຫົວໜ້າພະແນກການ, 2 ກອງບັນຊາການ, ອົງການທຽບເທົ່າ ແລະ ເຈົ້າເມືອງ 5 ເມືອງ.

- **ອີງຕາມ:** ການລາຍງານສະພາບການລັກລອບປູກກ້ວຍ ຢູ່ບັນດາເມືອງ ພາຍໃນແຂວງຫຼວງນໍ້າທາ.
- **ອີງຕາມ:** ແຈ້ງການຂອງຫ້ອງວ່າການລັດຖະບານ, ສະບັບເລກທີ 830/ຫລບ.ກສສ, ລົງວັນທີ 24/6/2014.
- **ອີງຕາມ:** ການຕົກລົງເຫັນດີເປັນເອກະພາບ ໃນກອງປະຊຸມຄະນະປະຈໍາພັກແຂວງ ຮ່ວມກັບພະແນກການກ່ຽວຂ້ອງ ແລະ ເມືອງ ຄັ້ງວັນທີ 4/7/2014.

ເພື່ອເຮັດໃຫ້ປະຊາຊົນພາຍໃນແຂວງຫຼວງນໍ້າທາພວກເຮົາ ມີເຂົ້າກິນພຽງພໍ, ມີສ່ວນແຮໄວ້ແລະຂາຍເປັນສິນຄ້າ; ທັງເປັນການສະກັດກັ້ນການລັກລອບປູກກ້ວຍໃສ່ດິນນາ, ຄຸ້ມຄອງການປູກກ້ວຍໃຫ້ຖືກຕ້ອງຕາມກົດໝາຍການລົງທຶນ, ສະດວກໃນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ສາມາດເກັບລາຍຮັບເຂົ້າງົບປະມານ.

**ເຈົ້າແຂວງຯຫຼວງນໍ້າທາ ອອກຄໍາສັ່ງ:**

1. ຫ້າມປູກກ້ວຍໃສ່ດິນນາ ຢູ່ບັນດາເມືອງ ພາຍໃນແຂວງຫລວງນໍ້າທາ ຢ່າງເດັດຂາດ.
2. ບ່ອນໃດທີ່ໄດ້ປູກແລ້ວ ແມ່ນມອບໃຫ້ເຈົ້າເມືອງ ແຕ່ງຕັ້ງວິຊາການຂອງຕົນ ລົງເຮັດສັນຍານໍາແຕ່ລະຄອບຄົວເຈົ້າຂອງດິນ ແລະ ຜູ້ດໍາເນີນທຸລະກິດປູກກ້ວຍ ທີ່ມາເຊົ່າ ຫຼື ສໍາປະທານດິນປູກກ້ວຍໃຫ້ລະອຽດຮັດກຸມ ແລະ ກໍານົດເວລາ 3 ປີ ນັບແຕ່ປີ 2014-2017. ໃນນັ້ນຕ້ອງໃຫ້ຜູ້ດໍາເນີນທຸລະກິດປູກກ້ວຍ ເອົາເງິນມາຄໍ້າປະກັນໄວ້ນໍາທະນາຄານ ທີ່ຕັ້ງຢູ່ພາຍໃນເມືອງຂອງຕົນ ໃນມູນຄ່າ 20 ລ້ານກີບຕໍ່ໜຶ່ງເຮັກຕາ ເພື່ອເປັນທຶນສໍາລັບການຈັດສັນ, ຟື້ນຟູທີ່ດິນ ແລະ ປັບປຸງສະພາບແວດລ້ອມໃຫ້ຄືນສູ່ປົກກະຕິ ໃນເວລາສິ້ນສຸດສັນຍາ. ກໍລະນີຜູ້ດໍາເນີນທຸລະກິດປູກກ້ວຍ ຫາກໄດ້ທໍາລາຍລະບົບຄອງເໝືອງ ຕ້ອງວາງເງິນຄໍ້າປະກັນສໍາລັບການສ້ອມແປງ ລະບົບຄອງເໝືອງຄືນໃໝ່ອີງຕາມການວັດແທກ ແລະ ຄິດໄລ່ມູນຄ່າຂອງ ວິຊາການຕົວຈິງ.

3. ສຳລັບບ່ອນທີ່ ບໍ່ທັນໄດ້ປູກ ຫຼື ກຳລັງກະກຽມປູກ ແມ່ນໃຫ້ຢຸດຕິ ການປູກກ້ວຍ ຢ່າງສິ້ນເຊີງ.

4. ນັບແຕ່ມື້ອອກຄຳສັ່ງສະບັບນີ້ເປັນຕົ້ນໄປ ທຸກໆການສົ່ງອອກໝາກກ້ວຍ ແມ່ນໃຫ້ສົ່ງອອກຜ່ານດ່ານສາກົນບໍ່ເຕັ່ນບ່ອນດຽວ ບໍ່ອະນຸຍາດ ໃຫ້ສົ່ງອອກຜ່ານດ່ານທ້ອງຖິ່ນ ແລະ ດ່ານອື່ນໆຢ່າງເດັດຂາດ.

5. ທຸກການນຳເຂົ້າ ວັດຖຸ-ອຸປະກອນ-ຝຸ່ນ-ປຸຍຕ່າງໆ ເພື່ອມາສົ່ງເສີມການປູກກ້ວຍ ແມ່ນໃຫ້ເສຍ ພາສີ-ອາກອນນຳເຂົ້າ ຕາມລະບຽບກົດໝາຍ (ບໍ່ອະນຸຍາດໃຫ້ຍົກເວັ້ນ).

6. ມອບໃຫ້ ເຈົ້າໜ້າທີ່ພາສີ-ອາກອນ ຕິດຕາມກວດກາ, ຄິດໄລ່ເກັບຄ່າພັນທະຕ່າງໆ ເຊັ່ນ: ອາກອນມູນຄ່າເພີ່ມ, ອາກອນລາຍໄດ້ຈາກຄ່າເຊົ່າດິນຈາກເຈົ້າຂອງທີ່ດິນ, ອາກອນກຳໄລຈາກຜູ້ດຳເນີນທຸລະກິດປູກກ້ວຍ ແລະ ອາກອນອື່ນໆ ໃຫ້ຄົບຖ້ວນ ຕາມລະບຽບການ.

7. ເມື່ອໝົດກຳນົດສັນຍາ ຜູ້ລົງທຶນຕ້ອງເກັບກູ້ຕົ້ນກ້ວຍ(ເຫງົ້າກ້ວຍ) ອອກຈາກເນື້ອທີ່ດິນທີ່ຕົນເອງປູກໃຫ້ໝົດ; ພ້ອມທັງປັບປຸງສະພາບດິນ, ລະບົບຄອງເໝືອງ, ສິ່ງແວດລ້ອມໃຫ້ຄືນສູ່ປົກກະຕິ ແລະ ຈັດສັນທີ່ດິນແຕ່ລະຕອນ ສົ່ງຄືນໃຫ້ເຈົ້າຂອງດິນແຕ່ລະຄອບຄົວຢ່າງຄົບຖ້ວນແລ້ວ ຈຶ່ງສາມາດຖອນເງິນຄ້ຳປະກັນໄດ້ ແລະ ໃຫ້ຢຸດຕິການປູກກ້ວຍ ໃສ່ດິນນາຢ່າງສິ້ນເຊີງ; ຖ້າຫາກວ່າ ບໍລິສັດ, ບຸກຄົນ, ນິຕິບຸກຄົນ ຫຼື ເຈົ້າຂອງທີ່ດິນ ຍັງສືບຕໍ່ອະນຸຍາດໃຫ້ເຊົ່າ ຫຼື ສຳປະທານດິນນາ ເພື່ອປູກກ້ວຍອີກລັດຈະຍຶດ ເອົາດິນຕອນດັ່ງກ່າວ ເປັນຂອງລັດ.

8. ຖ້າຜູ້ດຳເນີນທຸລະກິດປູກກ້ວຍ ບໍ່ສາມາດປະຕິບັດ ຕາມທີ່ໄດ້ກຳນົດໄວ້ ໃນຂໍ້ທີ 7 ຂອງຄຳສັ່ງສະບັບນີ້ ເງິນຄ້ຳປະກັນທັງໝົດ ທີ່ຝາກໄວ້ ຢູ່ທະນາຄານ ຈະຖືກຣິບເປັນຂອງລັດ.

9. ຖ້າຫາກ ບໍລິສັດ, ບຸກຄົນ, ນິຕິບຸກຄົນໃດ ຫາກລະເມີດ ຫຼື ຝ່າຝືນຈະຖືກປະຕິບັດ ຕາມລະບຽບ, ກົດໝາຍ ຢ່າງເຂັ້ມງວດ.

10.ມອບໃຫ້ເຈົ້າເມືອງ ນຳເອົາຄຳສັ່ງສະບັບນີ້ ລົງເຜີຍແຜ່ ໃຫ້ອົງການປົກຄອງບ້ານ, ປະຊາຊົນ ແລະ ນັກທຸລະກິດ ທີ່ມາລົງທຶນປູກກ້ວຍ ຮັບຮູ້, ເຂົ້າໃຈ ຢ່າງທົ່ວເຖິງ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

11.ຄຳສັ່ງສະບັບນີ້ ນຳໃຊ້ປ່ຽນແທນຄຳສັ່ງສະບັບ ເລກທີ 02/ຈຂ, ລົງວັນທີ 20/11/2011 ແລະ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງຫຼວງນ້ຳທາ

ດຣ ພິມມະສອນ ເລືອງຄຳມາ